Washington State Attorney General's Office

# ຮູ້ຈັກສິດຂອງທ່ານ

## ການເບິ່ງແຍງເພື່ອຢືນຢັນເພດສະພາບ

### ການເບິ່ງແຍງເພື່ອຢືນຢັນເພດສະພາບ ແມ່ນຖືກກົດໝາຍ ແລະ ໄດ້ຮັບການປົກປ້ອງໃນລັດວໍຊິງຕັນ

**ລັດວໍຊິຕັນປົກປ້ອງການເຂົ້າເຖິງການເບິ່ງແຍງເພື່ອຢືນຢັນເພດສະພາບ:**[1]

- ຜູ້ສະໜອງປະກັນສຸຂະພາບ ແລະ ແຜນສຸຂະພາບ ຕ້ອງບໍ່ຈຳແນກດ້ວຍວິທີການໃດໆ ບົນພື້ນຖານລົດສະນິຍົມທາງເພດ ແລະ ອັດຕະລັກທາງເພດຂອງບຸກຄົນ.
- ລັດວໍຊິງຕັນຫ້າມຜູ້ສະໜອງປະກັນສຸຂະພາບ ແລະ ແຜນປະກັນສຸຂະພາບຮອບດ້ານ ປະຕິເສດ ຫຼື ຈຳກັດການຄຸ້ມຄອງການເບິ່ງແຍງເພື່ອຢືນຢັນເພດສະພາບ ສຳລັບບຸກຄົນບໍ່ວ່າຈະມີອາຍຸເທົ່າໃດ ເວລາທີ່ຖືກລະບຸວ່າຈຳເປັນຕ້ອງໄດ້ຮັບການປິ່ນປົວ, ສອດຄ່ອງກັບການສະແດງອອກທາງເພດ ຫຼື ອັດຕະລັກທາງເພດຂອງບຸກຄົນ, ແລະ ໂດຍອີງຕາມມາດຕະຖານການປິ່ນປົວທີ່ໄດ້ຮັບການຍອມຮັບ.[2]
- ຫ້າມບໍ່ໃຫ້ມີການປະຕິເສດ ຫຼື ຂໍ້ຈຳກັດໃດໆ ເວັ້ນແຕ່ ຜູ້ສະໜອງບໍລິການດ້ານສຸຂະພາບທີ່ມີປະສົບການເຊິ່ງບົ່ງມະຕິ ຫຼື ສະໜອງການເບິ່ງແຍງເພື່ອຢືນຢັນທາງເພດ ໄດ້ມີການທົບທວນຄືນ ແລະ ຢັ້ງຢືນວ່າ ການປະຕິເສດ ຫຼື ຂໍ້ຈຳກັດນັ້ນ ມີເຫດຜົນທີ່ເໝາະສົມທາງການແພດ.
- ອາຍຸອາດເປັນໜຶ່ງໃນຫຼາຍໆປັດໄຈທີ່ນຳມາພິຈາລະນາວ່າຈະມີຂັ້ນຕອນໃດທີ່ຈຳເປັນທາງການແພດ ແລະ ມີການບົ່ງມະຕິໂດຍອີງຕາມມາດຕະຖານການເບິ່ງແຍງດູແລທີ່ເປັນທີ່ຍອມຮັບ.[3]
- ຜູ້ສະໜອງປະກັນສຸຂະພາບ ຫຼື ແຜນສຸຂະພາບ ອາດຈະບໍ່ປະຕິບັດໃຊ້ຂໍ້ຍົກເວັ້ນປະເພດເຄື່ອງສຳອາງ ຫຼື ຂໍ້ຍົກເວັ້ນທີ່ກຳນົດໄວ້ ເພື່ອປະຕິເສດການເບິ່ງແຍງເພື່ອຢືນຢັນເພດສະພາບ ເວລາທີ່ມີການບົ່ງມະຕິວ່າ ມີຄວາມຈຳເປັນທາງການແພດ.
- Washington Health Care Authority (HCA, ອົງການສາທາລະນະສຸກລັດວໍຊິງຕັນ), Medicaid ທີ່ຄຸ້ມຄອງແຜນປິ່ນປົວ ແລະ ຜູ້ສະໜອງການເບິ່ງແຍງສຸຂະພາບທີ່ໃຫ້ການສະໜອງ ແລະ ການບໍລິຫານການບໍລິການຕ່າງໆ ໂດຍຜ່ານ HCA ອາດຈະບໍ່ມີການຈຳແນກການບໍລິຫານ ຫຼື ການສະໜອງການບໍລິການເບິ່ງແຍງເພື່ອຢືນຢັນເພດສະພາບ ບົນພື້ນຖານອັດຕະລັກ ຫຼື ການສະແດງອອກທາງເພດທີ່ປົກຄຸມບຸກຄົນນັ້ນ.[4]
- ໂຄງການ Medicaid ຂອງລັດວໍຊິຕັນ, Apple Health, ຄຸ້ມຄອງການເບິ່ງແຍງເພື່ອຢືນຢັນເພດສະພາບ ໃນເວລາທີ່ມີຄວາມຈຳ, ປອດໄພ, ມີປະສິດທິພາບ ທາງການແພດ ແລະ ບໍ່ແມ່ນການທົດລອງ.[5]
- ແຜນສຸຂະພາບພະນັກງານໃນລັດໄດ້ລະບຸຈະແຈ້ງກ່ຽວກັບການຄຸ້ມຄອງການເບິ່ງແຍງເພື່ອຢືນຢັນເພດສະພາບ.[6]
- ໃນລັດວໍຊິງຕັນ, ມັນບໍ່ເປັນມືອາຊີບ ທີ່ຜູ້ສະໜອງບໍລິການ ຈະດຳເນີນການປ່ຽນເພດສະພາບໃຫ້ແກ່ຄົນເຈັບທີ່ມີອາຍຸຕ່ຳກວ່າ 18 ປີ.[7]
- ຜູ້ສະໜອງການປິ່ນປົວສຸຂະພາບ, ຜູ້ສະໜອງປະກັນສຸຂະພາບ ແລະ ສະຖານທີ່ບໍລິການຕ່າງໆ ບໍ່ຈຳເປັນຕ້ອງສະໜອງການບໍລິການ ຫຼື ໃຫ້ເງິນ ແກ່ການເບິ່ງແຍງສຸຂະພາບເພື່ອຢືນຢັນເພດສະພາບ ຍ້ອນຄວາມຮູ້ສຶກຜິດຕໍ່ບາບ ຫຼື ເຫດຜົນທາງສາສະໜາຕ່າງໆ; ແຕ່ວ່າ, ຜູ້ສະໜອງປະກັນສຸຂະພາບຕ້ອງໄດ້ລະບຸແຈ້ງກ່ຽວກັບບໍລິການຕ່າງໆ ທີ່ບໍ່ໃຫ້ການຄຸ້ມຄອງ ແລະ ວິທີການທີ່ບຸກຄົນນັ້ນ ຍັງຈະສາມາດເຂົ້າເຖິງການປິ່ນປົວທີ່ວ່ອງໄວ.[8]

**ລັດວໍຊິງຕັນປົກປ້ອງຄົນໃນລັດວໍຊິງຕັນ ຈາກການປະຕິບັດທາງແພ່ງ ແລະ ອາດຍາໃນລັດອື່ນໆເຊິ່ງມີຂໍ້ຈຳກັດ ຫຼື ລົງໂທດ ທາງອາດຍາຕໍ່ການເບິ່ງແຍງເພື່ອຢືນຢັນເພດສະພາບ:**

- Shield Law (ກົດໝາຍປົກປ້ອງ) ຂອງລັດວໍຊິງຕັນ ໃຫ້ການປົກປ້ອງຢ່າງກວ້າງຂວາງຕໍ່ປະຊາຊົນໃນລັດວໍຊິງຕັນ ຈາກການສອບສວນ ຫຼື ການດຳເນີນຄະດີຂັ້ນສານໃນລັດອື່ນເຊິ່ງກ່ຽວຂ້ອງກັບການເບິ່ງແຍງເພື່ອຢືນຢັນເພດສະພາບທີ່ຖືກຕ້ອງຕາມກົດໝາຍ ທີ່ສະໜອງໃຫ້ໃນລັດວໍຊິງຕັນ..[9]
- ໂດຍທົ່ວໄປ, Shield Law ຫ້າມ ສານ, ລັດ ແລະ ອົງການຈັດຕັ້ງຂັ້ນທ້ອງຖິ່ນ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍໃນວໍຊິງຕັນ, ແລະ ບໍລິສັດ ຫຼື ນິຕິບຸກຄົນທີ່ມີສຳນັກງານໃນວໍຊິງຕັນ ຈາກການຈັບກຸມ, ການສະໜອງຂໍ້ມູນ ຫຼື ການເຂົ້າຮ່ວມໃນ ຫຼື ການປະຕິບັດໃຊ້ຂະບວນການທາງກົດໝາຍຂອງລັດອື່ນໆທີ່ກ່ຽວຂ້ອງກັບການເບິ່ງແຍງເພື່ອການຢືນຢັນເພດສະພາບທີ່ຖືກຕ້ອງຕາມກົດໝາຍທີ່ສະໜອງໃນລັດວໍຊິງຕັນ.

---

1 ເບິ່ງ, ຕົວຢ່າງ, Revised Code of Washington (RCW, ລະຫັດຂອງວໍຊິງຕັນທີ່ປັບປຸງແລ້ວ) 48.43.0128; Washington Administratvie Code (WAC, ລັດຫັດບໍລິຫານຂອງວໍຊິຕັນ) 284-43-5151; RCW 49.60.030(e); RCW 49.60.040(27); RCW 49.60.178(1); RCW 48.30.300(1), (2).

2 ແຜນປິ່ນປົວສຸຂະພາບທີ່ຈ່າຍເອງ ເຊິ່ງນາຍຈ້າງເປັນຜູ້ອອກໃຫ້ໂດຍກົງ ຫຼາຍກວ່າມາຈາກຜູ້ສະໜອງປະກັນສຸຂະພາບ, ແມ່ນຖືກຄຸ້ມຄອງໂດຍ Employee Retirement Income Security Act (ERISA, ກົດໝາຍວ່າດ້ວຍຄວາມໝັ້ນຄົງດ້ານລາຍຮັບຂອງພະນັກງານບຳນານ) ແລະ ຂຶ້ນກັບບົດບັນຍັດຕ້ານການຈຳແນກ ຂອງ Affordable Care Act (ກົດໝາຍວ່າດ້ວຍການເບິ່ງແຍງສຸຂະພາບທີ່ສາມາດຈ່າຍໄດ້) (ພາກ 1557). ຖ້າທ່ານບໍ່ແນ່ໃຈວ່າແຜນສຸຂະພາບຂອງທ່ານມີປະກັນຄຸ້ມຄອງ ຫຼື ຈ່າຍເອງ, ທ່ານສາມາດຕິດຕໍ່ເຖິງ Washington State Insurance Commissioner (ຄະນະກຳມະການປະກັນໄພແຫ່ງລັດວໍຊິງຕັນ) (ຂໍ້ມູນຕິດຕໍ່ຢູ່ດ້ານລຸ່ມ), ແລະ ພວກເຂົາເຈົ້າສາມາດຊ່ວຍທ່ານໄດ້.

3 ເວລາທີ່ຈະພິຈາລະນາວ່າ ຂັ້ນຕອນການເບິ່ງແຍງເພື່ອຢືນຢັນເພດສະພາບໃດໜຶ່ງໄດ້ມີການກຳນົດຂຶ້ນຕາມມາດຕະຖານການເບິ່ງແຍງທີ່ເປັນທີ່ຍອມຮັບໄດ້ຫຼືບໍ່ນັ້ນ, ຜູ້ສະໜອງບໍລິການປະກັນສຸຂະພາບ ຫຼື ແຜນສຸຂະພາບ ອາດຈະມີການຄົ້ນຄວ້າໃນ ເອກະສານມາດຕະຖານການເບິ່ງແຍງປິ່ນປົວທີ່ຕີພິມໂດຍ World Professional Association for Transgender Health (WPATH)

4 RCW 74.09.675(1).

5 WAC 182-531-1675(1).

6 ເບິ່ງ, Transgender Legal Defense & Education Fund, ແຜນສຸຂະພາບພະນັກງານຂອງລັດ – ວໍຊິງຕັນ https://transhealthproject.org/resources/state-employee-health-plans/washington-state-employee-health-plans/

7 RCW 18.130.180(26); Tingley v. Ferguson, 47 F.4th 1055, 1063–64 (9th Cir. 2022), cert. denied, 144 S. Ct. 33, 217 L. Ed. 2d 251 (2023).

8 RCW 18.130.160.

9 RCW 7.115.020.

**ຄຳຕຳນິສົ່ງຂ່າວ ຫຼື ຂໍ້ກັງວົນກ່ຽວກັບການລະເມີດກົດໝາຍລັດ? ແຈ້ງໃຫ້ພວກເຮົາຮູ້:**

ທາງໂທລະສັບ:
ໃນວໍຊິງຕັນ: 800-551-4636
ຢູ່ນອກວໍຊິງຕັນ: 206-464-6684
ບໍລິການສຳລັບຄົນພິການ: 800-833-6388

ທາງອອນລາຍ:
https://www.atg.wa.gov/contactus.aspx
https://fortress.wa.gov/atg/formhandler/ago/reproductiverights.aspx

- Shield Law ຍັງປົກປ້ອງຜູ້ສະໜອງບໍລິການດ້ານສຸຂະພາບໃນວໍຊິງຕັນ ຈາກໄພນາບຂູ່ ແລະ ການລ່ວງລະເມີດ ໂດຍການເຮັດໃຫ້ເຂົາເຈົ້າ ແລະ ສະມາຊິກຄອບຄົວມີສິດເຂົ້າເຖິງ Address Confidentiality Program (ແຜນງານຮັກສາຄວາມລັບ ດ້ານທີ່ຢູ່ອາໄສ) ຂອງວໍຊິງຕັນ.
- ມັນອະນຸຍາດໃຫ້ບຸກຄົນຟ້ອງຮ້ອງເຈົ້າໜ້າທີ່ຂອງລັດທີ່ມີການແຊກແຊງຕໍ່ການບໍລິການປິ່ນປົວສຸຂະພາບທີ່ໄດ້ຮັບການປົກປ້ອງຂອງບຸກຄົນນັ້ນ ໃນລັດວໍຊິງຕັນ.[10]
- ຂໍ້ມູນເພີ່ມເຕີມກ່ຽວກັບ Shield Law ຂອງລັດວໍຊິງຕັນອາດເຂົ້າໄປເບິ່ງຢູ່ບ່ອນນີ້: https://www.atg.wa.gov/reproductive-and-gender-affirming-care-shielding-providers-seekers-and-helpers-out-state-legal

**ລັດວໍຊິງຕັນປົກປ້ອງການເຂົ້າເຖິງຂໍ້ມູນສ່ວນຕົວດ້ານສຸຂະພາບຂອງຊາວໜຸ່ມ:**

- ສູນພັກພິງຊາວໜຸ່ມທີ່ມີໃບອະນຸຍາດໃນລັດວໍຊິງຕັນຖືກຫ້າມຈາກການຕິດຕໍ່ກັບພໍ່ແມ່ ຫຼື ຜູ້ປົກຄອງຂອງຊາວໜຸ່ມທີ່ອາໄສຢູ່ໃນສູນພັກພິງນັ້ນ ເວລາທີ່ຊາວໜຸ່ມສະແຫວງຫາການເບິ່ງແຍງເພື່ອຢືນຢັນເພດສະພາບ.
- ແທນທີ່, ສູນພັກພິງຊາວໜຸ່ມທີ່ມີໃບອະນຸຍາດນັ້ນ ຕ້ອງຕິດຕໍ່ຫາ Department of Children, Youth, and Families (ກະຊວງຄຸ້ມຄອງເດັກ, ຊາວໜຸ່ມ ແລະ ຄອບຄົວ) ພາຍໃນ 72 ຊົ່ວໂມງ ນັບຈາກເວລາທີ່ຊາວໜຸ່ມຄົນນັ້ນມາເຖິງສູນພັກພິງ.[11]
- ພະນັກງານຂອງໂຮງຮຽນລັດໃນວໍຊິງຕັນອາດບໍ່ແບ່ງປັນຂໍ້ມູນຄວາມລັບດ້ານສຸຂະພາບ ຫຼື ການສຶກສາຂອງນັກຮຽນ (ລວມເຖິງສະຖານະພາບການຂ້າມເພດ ຫຼື ສະຖານະພາບເພດທີ່ບໍ່ກົງກັບເພດທີ່ມີຕັ້ງແຕ່ເກີດ ຫຼື ເພດທີ່ກຳນົດໃຫ້ໃນຕອນເກີດ) ໃຫ້ກັບຄົນອື່ນໆ, ລວມມີ ພໍ່ແມ່ນັກຮຽນ, ນັກຮຽນຄົນອື່ນໆ, ພະນັກງານໃນໂຮງຮຽນ ຫຼື ຄົນທີ່ບໍ່ໄດ້ຢູ່ໃນໂຮງຮຽນ ນອກຈາກວ່າເປັນຂໍ້ບັງຄັບທາງກົດໝາຍ[12] ຫຼື ນອກຈາກວ່ານັກຮຽນຄົນນັ້ນອະນຸຍາດໃຫ້ແບ່ງປັນຂໍ້ມູນໄດ້.[13]

**ຄຳຕຳນິສົ່ງຂ່າວ ຫຼື ຂໍ້ກັງວົນກ່ຽວກັບການລະເມີດກົດໝາຍລັດ?**

- ຜູ້ຕິດຕາມ (subscribers) ແຜນງານ Apple Health (Medicaid) ແລະ Public Employees Benefits Board (PEBB, ສະພາຄຸ້ມຄອງຜົນປະໂຫຍດພະນັກງານລັດ) ແລະ School Employees Benefits Board (SEBB, ສະພາຄຸ້ມຄອງຜົນປະໂຫຍດພະນັກງານໂຮງຮຽນ), ໃຫ້ຕິດຕໍ່ເຖິງ ຜູ້ປະສານງານດ້ານ Americans with Disability Act (ADA, ກົດໝາຍວ່າດ້ວຍຄົນພິການອາເມລິກາ) ຂອງ Health Care Authority:<br>ທາງອອນລາຍ: https://support.hca.wa.gov/hcasupport;<br>ໂທລະສັບ: 855-682-0787;<br>ອີເມວ: compliance@hca.wa.gov
- ຜູ້ຕິດຕາມ (subscribers) ແຜນດູແລສຸຂະພາບຂອງລັດແບບອື່ນໆທັງໝົດ, ຕິດຕໍ່:
  - Office of the Insurance Commissioner (ສຳນັກງານຄະນະກຳມະການປະກັນໄພ): ໂທລະສັບ: 800-562-6900; ໂທລະສັບ TDD: 360-586-0241;<br>ທາງອອນລາຍ: https://www.insurance.wa.gov/complaints-appeals-fraud/complaints
  - Washington State Human Right Commission (ຄະນະກຳມະການດ້ານສິດທິມະນຸດລັດວໍຊິງຕັນ): ໂທລະສັບ: 800-233-3247;<br>ທາງອອນລາຍ: https://wahum.my.site.com/FileaComplaintOnline/s/?language=en_US
  - Attorney General's Office (ສຳນັກງານໄອຍະການສູງສຸດ): ໂທລະສັບ (ໃນວໍຊິງຕັນ): 800-551-4636; ໂທລະສັບ (ຢູ່ນອກວໍຊິງຕັນ): 206-464-6684; ບໍລິການສຳລັບຄົນພິການ: 800-833-6388;<br>ທາງອອນລາຍ: https://www.atg.wa.gov/contactus.aspx
- ສຳລັບການຕຳນິສົ່ງຂ່າວ ຫຼື ຂໍ້ກັງວົນທີ່ກ່ຽວຂ້ອງກັບໂຮງຮຽນລັດໃນວໍຊິຕັນ, ໃຫ້ຕິດຕໍ່ຫາ Washington State Office of the Superintendent of Public Instruction's Equity and Civil Rights Office (ຫ້ອງການປົກປ້ອງຄວາມເທົ່າທຽມ ແລະ ສິດທິພົນລະເມືອງ ທີ່ສຳນັກງານຄຸ້ມຄອງການກໍ່ສ້າງລັດວໍຊິຕັນ) ທີ່ (360) 725-6162/TTY: (360) 664-3631.

**ຈະຊອກຫາຜູ້ສະໜອງການເບິ່ງແຍງເພື່ອຢັ້ນຢືນເພດສະພາບໄດ້ຢູ່ໃສ**

- https://lgbtqhealthcaredirectory.org/

---

10 RCW 7.115.040.

11 See RCW 13.32A.082(1)(b), (2)(c)-(d).

12 ຕົວຢ່າງ, Federal Educational Rights and Privacy Act (FERPA, ກົດໝາຍວ່າດ້ວຍສິດ ແລະ ຄວາມເປັນສ່ວນຕົວທາງດ້ານການສຶກສາຂອງລັດຖະບານກາງ) ອາດຮຽກຮ້ອງໃຫ້ມີການເປີດເຜີຍຂໍ້ມູນໃດໜຶ່ງ. 20 United States Code (U.S.C., ລະຫັດຂອງສະຫະລັດ) § 1232g; 34 Code of Federal Regulations (C.F.R., ລະຫັດນິຕິກຳຂອງລັດຖະບານກາງ) ພາກ 99.

13 Equity and Civil Rights Office, Washington State Office of the Superintendent of Public Instruction, ຫ້າມການຈຳແນກໃນໂຮງຮຽນລັດຢູ່ໃນວໍຊິງຕັນ - ຄຳແນະນຳສຳລັບໂຮງຮຽນຂັ້ນເມືອງເພື່ອຈັດຕັ້ງປະຕິບັດໝວດທີ 28A.640 ແລະ 28A.642 RCW ແລະ ໝວດທີ 392-190 WAC, p. 29 (ກຸມພາ 2012) (https://ospi.k12.wa.us/sites/default/files/2023-08/prohibiting_discrimination_in_washington_public_schools_february2012revisedsep2019disclaimer_1.pdf) (ປັບປຸງລ້າສຸດ ວັນທີ 17 ມິຖຸນາ 2024); ພ້ອມທັງຂໍໃຫ້ເບິ່ງ, RCW 28A.642.010; RCW 28A.642.020; RCW 28A.642.080.